# ປະຫວັດສາດໂດຍຫຍໍ້ຂອງປະເທດລາວ

## ເມືອງຢູ່ໃຈກາງແຜ່ນດິນໃຫຍ່ອາຊີອາຄະເນ

### ກຣານທ໌  ເອແວນສ໌

ການບັນຍາຍປະຫວັດສາດຂອງ ສາດສະດາຈານ ກຣານທ໌ ເອແວນສ໌ ແມ່ນເໝືອນກັບຮູບທີ່ວາດ ແລະແຕ້ມຢູ່ບົນກຳແພງທີ່ລຽງກັນເປັນລຳດັບ ຫລາຍກວ່າທີ່ຈະເປັນການເລົ່າເຫດການປະຫວັດສາດ ທີ່ເກີດຂຶ້ນຕາມລຳດັບຂອງການເວລາແບບທີ່ຮັບຮູ້ກັນທົ່ວໄປ. ວິທີນຳສະເໜີໃນລັກສະນະນີ້ ແມ່ນເຮັດໃຫ້ປຶ້ມດັ່ງກ່າວເປັນທີ່ໜ້າອ່ານ ແລະ ຍັງເປັນການຟື້ນຟູປະຫວັດສາດໃຫ້ມີຊີວິດຂຶ້ນມານຳອີກ.

ຜູ້ແຕ່ງມີຄວາມໄດ້ປຽບຢ່າງຫລວງຫລາຍ ດ້ວຍການໄດ້ຈັດພິມບົດສຶກສາຄົ້ນຄວ້າທີ່ລຶງເລິກ ສະເພາະດ້ານກ່ຽວກັບປະເທດລາວຈຳນວນໜຶ່ງມາກ່ອນແລ້ວ ເຊັ່ນວ່າ: *Lao Peasants Under Socialism* (1990), *The Politics of Ritual and Remembrance: Laos since 1975* (1998) ແລະໃນຖານະທີ່ເຄີຍເປັນບັນນາທິການໃຫ້ກັບປຶ້ມ *Laos: Culture and Society (1999)* ໃນປຶ້ມປະຫວັດສາດໂດຍຫຍໍ້ຂອງປະເທດລາວຂອງທ່ານ ສາດສະດາຈານ ກຣານທ໌ ເອແວນສ໌  ໄດ້ຖອດຖອນເອົາຫລາຍສິ່ງຫລາຍຢ່າງ ທີ່ເປັນການຄົ້ນພົບຈາກຜົນງານຂອງທ່ານໃນຊ່ວງກ່ອນໜ້ານັ້ນມານຳສະເໜີ ເພື່ອໃຫ້ປະໂຫຍດແກ່ບັນດາທ່ານຜູ້ອ່ານຫລາຍຍິ່ງຂຶ້ນ. ຖ້າມອງໃນແງ່ຄຸນຄ່າຂອງປຶ້ມດັ່ງກ່າວແລ້ວ ເຊິ່ງກໍ່ມີຫລາຍ ມັນກໍ່ເປັນການຍາກທີ່ຈະພົບເຫັນຈຸດອ່ອນ ແລະຂໍ້ຂາດຕົກບົກພ່ອງອັນໃຫຍ່ໂຕໃດໆເລີຍ. ປຶ້ມທີ່ຈົບງາມສົມບູນຫົວນີ້ ໄດ້ຖືກຂຽນຂຶ້ນດ້ວຍຄວາມພະຍາຍາມທຸ່ມເທເປັນການສ່ວນຕົວ ແລະ ຄວາມອາດຫານຫລາຍສົມຄວນ ທີ່ຈະກ່າວຫລາຍໆບັນຫາຂອງປະເທດນີ້ອອກມາ.

ດຣ. ຮັນສ໌ ລຸດເຕີ

ບົດວິຈານ *Short History of Laos, Vientiane Times*